# ອະນຸສັນຍາ 03
# ໂຄຕ້າການບໍລິການຂົນສົ່ງ ແລະ ການອອກໃບອະນຸຍາດ

**ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງລາຊະອານາຈັກ ກໍາປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາ ທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອການອໍານວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຄົນ ຂ້າມແດນ (ຕໍ່ໄປນີ້ເອີ້ນວ່າ: "ອະນຸສັນຍາ");**

ລັດຖະບານແຫ່ງລາຊະອານາຈັກ ກໍາປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະ ຊາທິປະ ໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາທາລະນະລັດ ສັງຄົມນິ ຍົມ ຫວຽດນາມ (ຕໍ່ໄປນີ້ເອີ້ນວ່າ: "ລັດພາຄີ");

ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ລັດ ຖະບານແຫ່ງ ລາຊະອານາຈັກ ໄທ ແລະ ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອ ການອໍານວຍຄວາມ ສະດວກໃນການຂົນສົ່ງສິນຄ້າ ແລະ ຄົນຂ້າມແດນ ຊຶ່ງໄດ້ລົງນາມຄັ້ງທໍາອິດໃນວັນທີ 26 ພະຈິກ 1999 ທີ່ ນະຄອນຫຼວງວຽງຈັນ ແລະ ມີການດັດແກ້ເພີ່ມເຕີມໃນວັນທີ 29 ພະຈິກ 2001 ທີ່ ນະ ຄອນຫຼວງຢາງກຸ້ງ, ເຊິ່ງລາຊະ ອານາຈັກ ກໍາປູເຈຍ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 29 ພະຈິກ 2001 ທີ່ ນະຄອນຫຼວງຢາງກຸ້ງ, ສາທາລະນະລັດ ປະຊາຊົນ ຈີນ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 03 ພະຈິກ 2002 ທີ່ ພະນົມເປນ ແລະ ສະຫະພາບ ມຽນມາ ໄດ້ ຖືກຮັບເຂົ້າເປັນພາຄີ ໃນວັນທີ 19 ກັນຍາ 2003 ທີ່ ເມືອງຕາລີ ແລະ ມີການດັດແກ້ເພີ່ມເຕີມ ໃນວັນທີ 30 ເມສາ 2004 ທີ່ ພະນົມເປນ (ຕໍ່ໄປນີ້ເອີ້ນວ່າ: "ສັນຍາ");

ອີງຕາມມາດຕາ 03 (ບ) ຂອງສັນຍາ ຊຶ່ງມີຜົນໃຫ້ເອກະສານຊ້ອນທ້າຍ ແລະ ອະນຸສັນຍາ ຕ້ອງກໍາ ນົດລາຍ ລະອຽດທາງດ້ານເຕັກນິກ ຫຼື ເວລາ ແລະ/ຫຼື ສະຖານທີສະເພາະ ແລະ ໃຫ້ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຖື ເປັນສ່ວນໜຶ່ງຂອງສັນຍາ ແລະ ມີຜົນບັງຄັບໃຊ້ເທົ່າທຽມກັນ;

ອີງຕາມມາດຕາ 36 ຂອງສັນຍາທີ່ມີການດັດແກ້, ການລົງນາມ ແລະ ການໃຫ້ສັດຕະຍາບັນ ຫຼື ການຮັບຮອງ ແລະ ການມີຜົນບັງຄັບໃຊ້ຂອງສັນຍາ ອາດຈໍາແນກອອກຈາກເອກະສານຊ້ອນທ້າຍ ແລະ ອະ ນຸສັນຍາ;

ອີງຕາມກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ 6 ປະເທດ ຄັ້ງທີ 9 ທີ່ມະນີລາ ໃນເດືອນ ມັງກອນ 2000, ກອງປະຊຸມການຂົນສົ່ງພາຍໃຕ້ການຮ່ວມມືໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ຄັ້ງ 7 ທີ່ ໂຮ ຈິມິນ ໃນເດືອນ ສິງຫາ 2002 ແລະ ກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນ ລຸ່ມແມ່ນໍ້າຂອງ 6 ປະເທດ

ຄັ້ງທີ 11 ທີ່ ພະນົມເປນ ໃນເດືອນ ກັນຍາ 2002 ຊຶ່ງລັດຖະບານຂອງລັດພາຄີ ໄດ້ຕົກລົງເຫັນດີຕໍ່ແຜນງານການສ້າງສັນຍາ ແລະ ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຄັດຕິດສັນຍາສະບັບນີ້ໃຫ້ສໍາເລັດໃນປີ 2005; ແລະ

ອີງຕາມມາດຕາ 23 ຂອງສັນຍາສະບັບນີ້ ຊຶ່ງກໍານົດໃຫ້ມີອະນຸສັນຍານີ້ ເພື່ອກໍານົດລາຍລະອຽດ ທາງດ້ານເຕັກນິກ.

**ໄດ້ມີການຕົກລົງ ດັ່ງຕໍ່ໄປນີ້:**

## ມາດຕາ 01: ຂໍ້ກໍານົດໃຫ້ມີໃບອະນຸຍາດ.

ຜູ້ດໍາເນີນການຂົນສົ່ງຂອງລັດພາຄີໜຶ່ງຈະມີສິດດໍາເນີນການຂົນສົ່ງຂ້າມແດນໃນດິນແດນຂອງລັດ ພາຄີອື່ນຕາມມາດຕາ 23 ຂອງສັນຍາ ຕໍ່ເມື່ອຜູ້ດາເນີນການຂົນສົ່ງນັ້ນຖື "ໃບອະນຸຍາດຂົນສົ່ງທາງບົກພາຍ ໃຕ້ສັນຍາອະນຸພາກພື້ນລຸ່ມແມ່ນໍ້າຂອງ" (ຕໍ່ໄປນີ້ເອີ້ນວ່າ: "ໃບອະນຸຍາດ") ຕາມອະນຸສັນຍາສະບັບນີ້.

## ມາດຕາ 02: ຄຸນສົມບັດທີ່ໃຊ້ໃນການດໍາເນີນການ.

ກ. ພາຫະນະ.

ພາຫະນະທີ່ໃຊ້ໃນການດໍາເນີນການຂົນສົ່ງໄລຍະທີ 01 ຕາມສັນຍາ ໄດ້ແກ່ຍານພາຫະນະທີ່ໃຊ້ຂົນ ສົ່ງສິນຄ້າ ຫຼື ຜູ້ໂດຍສານທາງບົກຕາມທີ່ກໍານົດໄວ້ໃນມາດຕາ 01 ຂອງເອກະສານຊ້ອນທ້າຍ 02 ຂອງສັນ ຍາ.

ຂ. ຜູ້ດໍາເນີນການຂົນສົ່ງ.

1. ການດໍາເນີນການຂົນສົ່ງຂ້າມແດນເພື່ອຄ່າຕອບແທນ ຈະຕ້ອງດໍາເນີນໂດຍຜູ້ດໍາເນີນການ ຂົນສົ່ງ ຊຶ່ງໄດ້ຮັບອະນຸຍາດດໍາເນີນການຂົນສົ່ງຕາມມາດຕາ 21 ຂອງສັນຍາ ແລະ ຕາມເອ ກະສານຊ້ອນທ້າຍ 09 ຂອງສັນຍາເທົ່ານັ້ນ.
2. ລັດພາຄີ ຈະຕ້ອງແຈ້ງລາຍຊື່ຜູ້ດໍາເນີນການຂົນສົ່ງທີ່ໄດ້ຮັບອະນຸຍາດດໍາເນີນການຂົນສົ່ງ ແລະ ຖືໃບອະນຸຍາດຂົນສົ່ງທາງບົກພາຍໃຕ້ສັນຍາອະນຸພາກພື້ນລຸ່ມແມ່ນໍ້າຂອງ ຕໍ່ຄະນະກໍາ ມາທິການຮ່ວມ ເພື່ອເຜີຍແຜ່ໃຫ້ແກ່ລັດພາຄີອື່ນຕາມຄວາມເໝາະສົມ.

ຄ. ເສັ້ນທາງການຂົນສົ່ງ.

ເສັ້ນທາງການຂົນສົ່ງຈະຖືກຈໍາກັດໂດຍຈຸດເຂົ້າ-ຈຸດອອກເສັ້ນທາງ ແລະ ເຂດເສດຖະກິດ ຕາມທີ່ກໍາ ນົດໄວ້ໃນອະນຸສັນຍາ 01 ຂອງສັນຍາ.

## ມາດຕາ 03: ການຍົກເວັ້ນ.

ການຂົນສົ່ງດັ່ງຕໍ່ໄປນີ້ແມ່ນໄດ້ຮັບການຍົກເວັ້ນຈາກຂໍ້ກໍານົດໃຫ້ມີໃບອະນຸຍາດ ເພື່ອຈຸດປະສົງໃນ ການຂົນສົ່ງຂ້າມແດນ.

ກ. ການດໍາເນີນການຂົນສົ່ງສ່ວນບຸກຄົນຈະໄດ້ຮັບການຍອມຮັບຈາກປະເທດຜູ້ຮັບ ພາຍໃຕ້ເງື່ອນ

ໄຂວ່າການດໍາເນີນການຂົນສົ່ງສ່ວນບຸກຄົນດັ່ງກ່າວມີໜັງສືຮັບຮອງຄຸນສົມບັດ ຊຶ່ງອອກໂດຍຄະນະກໍາມະ ການອໍານວຍຄວາມສະດວກໃນການຂົນສົ່ງແຫ່ງຊາດຂອງປະເທດຜູ້ສົ່ງ ຫຼື ໜ່ວຍງານທີ່ໄດ້ຮັບມອບອໍານາດ ຈາກຄະນະກໍາມະການອໍານວຍຄວາມສະດວກໃນການຂົນສົ່ງແຫ່ງຊາດຂອງປະເທດຜູ້ສົ່ງ;

ຂ. ການສັນຈອນຂອງຍານພາຫະນະທີ່ບໍ່ໄດ້ໃຊ້ເພື່ອການຄ້າ;

ຄ. ການຂົນສົ່ງສົບ; ແລະ

ງ. ການຂົນສົ່ງເພື່ອໃຫ້ການຊ່ວຍເຫຼືອໃນກໍລະນີສຸກເສີນ (ລົດໂຮງໝໍ, ລົດດັບເພີງ, ລົດກູ້ໄພ, ການ ປະຕິບັດການເພື່ອມະນຸດສະທໍາ).

## ມາດຕາ 04: ຊະນິດຂອງໃບອະນຸຍາດ (ຈໍານວນຖ້ຽວ ແລະ ນໍ້າໜັກບັນທຸກ).

ກ. ສໍາລັບການຂົນສົ່ງຜູ້ໂດຍສານປະຈໍາທາງ.

ໃບອະນຸຍາດຈະມີຜົນຕໍ່ເນື່ອງໃນລະຫວ່າງທີ່ຍັງບໍ່ໝົດອາຍຸ ແລະ ຈະລະບຸເສັ້ນທາງການຂົນສົ່ງຈໍາ ນວນຖ້ຽວ ແລະ ນໍ້າໜັກບັນທຸກສູງສຸດຂອງການດໍາເນີນການຂົນສົ່ງ.

ຂ. ສໍາລັບການຂົນສົ່ງສິນຄ້າ ແລະ ການຂົນສົ່ງຜູ້ໂດຍສານບໍ່ປະຈໍາທາງ.

1. ໃບອະນຸຍາດທີ່ອອກໂດຍລັດພາຄີໜຶ່ງຈະມີຜົນຕໍ່ເນື່ອງກັນໃນລະຫວ່າງທີ່ຍັງບໍ່ໝົດອາຍຸ ແລະ ກໍ່ໃຫ້ເກີດສິດຕໍ່ຜູ້ຖືໃບອະນຸຍາດທີ່ຈະປະກອບການຂົນສົ່ງຂ້າມແດນໃນດິນແດນຂອງລັດພາຄີອື່ນ.
2. ຜູ້ຖືໃບອະນຸຍາດຈະຕ້ອງຈັດສັນໃບອະນຸຍາດໃຫ້ແກ່ພາຫະນະໃນການດໍາເນີນການຂົນສົ່ງ ຂ້າມແດນທີ່ຕົນເຫັນສົມຄວນ. ເຖິງຢ່າງໃດກໍ່ຕາມ, ໃນເວລາດຽວກັນຜູ້ຖືໃບອະນຸຍາດຈະສາ ມາດໃຊ້ໃບອະນຸຍາດ 01 ໃບຕໍ່ພາຫະນະ 01 ຄັນເທົ່ານັ້ນ.

## ມາດຕາ 05: ການອອກໃບອະນຸຍາດ ແລະ ຂັ້ນຕອນການຈັດສັນ.

ກ. ຄະນະກຳມະການອຳນວຍຄວາມສະດວກຂົນສົ່ງແຫ່ງຊາດຂອງປະເທດຜູ້ສົ່ງ ຫຼື ໜ່ວຍງານທີ່ໄດ້ ຮັບມອບອຳນາດຈາກຄະນະກຳມະການອຳນວຍຄວາມສະດວກຂົນສົ່ງແຫ່ງຊາດຂອງປະເທດຜູ້ສົ່ງຈະເປັນຜູ້ອອກໃບອະນຸຍາດ ແລະ ຈັດສັນໃບອະນຸຍາດໃຫ້ແກ່ຜູ້ດຳເນີນການຂົນສົ່ງຂອງຕົນ ໂດຍຖືຫຼັກບໍ່ເລືອກປະ ຕິບັດ. ລັດພາຄີ ຈະຍອມຮັບຮ່ວມກັນຕໍ່ໃບອະນຸຍາດດັ່ງກ່າວ.

ຂ. ສຳລັບຜູ້ໂດຍສານປະຈຳທາງ, ລັດພາຄີ ທີ່ດິນແດນຂອງຕົນຢູ່ໃນເສັ້ນທາງການຂົນສົ່ງຈະຕ້ອງ ດຳເນີນການທີ່ເໝາະສົມກ່ຽວກັບເງື່ອນໄຂ ແລະ/ຫຼື ຈຳນວນຂອງໃບອະນຸຍາດ.

ຄ. ສຳລັບການຂົນສົ່ງສິນຄ້າ ແລະ ການຂົນສົ່ງຜູ້ໂດຍສານບໍ່ປະຈຳທາງ, ລັດພາຄີແຕ່ລະປະເທດຈະ ມີສິດໃນການອອກໃບອະນຸຍາດບໍ່ເກີນ 500 ສະບັບ. ຈານວນໃບອະນຸຍາດດັ່ງກ່າວແມ່ນຢູ່ພາຍໃຕ້ການພິ ຈາລະນາທົບທວນໃນປະຈຳປີ ແລະ ການປັບປຸງໂດຍຄະນະກຳມາທິການຮ່ວມ.

## ມາດຕາ 06: ອາຍຸໃບອະນຸຍາດ ແລະ ການຕໍ່ອາຍຸ.

ກ. ໃບອະນຸຍາດມີອາຍຸ 01 ປີ ນັບຈາກວັນທີອອກ. ເຖິງຢ່າງໃດກໍ່ຕາມ, ໃນກໍລະນີທີ່ມີການໃຊ້ໃບ ອະນຸຍາດເຂົ້າໄປໃນດິນແດນຂອງລັດພາຄີອື່ນທີ່ບໍ່ແມ່ນປະເທດຜູ້ສົ່ງກ່ອນວັນໝົດອາຍຸຂອງໃບອະນຸຍາດ ນັ້ນໃຫ້ໃບອະນຸຍາດຂະຫຍາຍອາຍຸຕໍ່ໄປໄດ້ຈົນກວ່າການດຳເນີນການຂົນສົ່ງຖ້ຽວນັ້ນຈະສຳເລັດລົງໂດຍ ການນຳພາຫະນະກັບສູ່ປະເທດຜູ້ສົ່ງ.

ຂ. ໃບອະນຸຍາດຊຶ່ງອອກໂດຍຄະນະກຳມະການອຳນວຍຄວາມສະດວກຂົນສົ່ງແຫ່ງຊາດຂອງປະ

ເທດຜູ້ສົ່ງແກ່ຜູ້ດຳເນີນການຂົນສົ່ງຂອງຕົນຈະຕ້ອງເປັນແບບລະບຸຊື່ຜູ້ຮັບ, ບໍ່ສາມາດປ່ຽນມື ແລະ ບໍ່ສາ ມາດໂອນສິດໃຫ້ແກ່ກັນ.

ຄ. ອາຍຸຂອງໃບອະນຸຍາດຢູ່ພາຍໃຕ້ເງື່ອນໄຂວ່າໃບອະນຸຍາດດຳເນີນການຂົນສົ່ງຕາມມາດຕາ 21 ແລະເອກະສານຊ້ອນທ້າຍ 09 ຂອງສັນຍາ ຍັງຄົງມີຜົນໃຊ້ບັງຄັບຢູ່ນາ.

ງ. ການດຳເນີນການຂົນສົ່ງຂ້າມແດນ ຈະຕ້ອງສຳເລັດພາຍໃນໄລຍະເວລາ 30 ວັນນັບຈາກທີ່

ເຂົ້າໄປໃນດິນແດນຂອງປະເທດຜູ້ຮັບ ໂດຍການນຳພາຫະນະອອກຈາກດິນແດນຂອງປະເທດຜູ້ຮັບນັ້ນ. ທັງ ນີ້ໃນກໍລະນີທີ່ຜູ້ດຳເນີນການຂົນສົ່ງບໍ່ສາມາດອອກຈາກປະເທດຜູ້ຮັບໃນໄລຍະເວລາທີ່ກຳນົດ ຜູ້ດຳເນີນ ການຂົນສົ່ງຈະຕ້ອງແຈ້ງຕໍ່ໜ່ວຍງານທີ່ມີອຳນາດຂອງປະເທດຜູ້ຮັບ ແລະ ອາດຈະຕ້ອງຍື່ນຂໍຂະຫຍາຍເວ ລາຕໍ່ໜ່ວຍງານທີ່ມີອຳນາດຂອງປະເທດຜູ້ຮັບ ຊຶ່ງຈະອະນຸຍາດໃຫ້ຂະຫຍາຍໄລຍະເວລາຫາກຄວາມຊັກຊ້າ ເກີດຈາກເຫດສຸດວິໄສ ຫຼື ເຫດອັນສົມຄວນອື່ນໆ.

## ມາດຕາ 07: ຮູບແບບໃບອະນຸຍາດ ແລະ ການໃຊ້ໃບອະນຸຍາດເປັນຫຼັກຖານ.

ກ. ຮູບແບບ.

ໃບອະນຸຍາດຈະຕ້ອງເປັນພາສາອັງກິດ ທັງນີ້ແມ່ນບໍ່ຫ້າມການໃຊ້ພາສາປະຈຳຊາດຄວບຄູ່ກັນໄປ ຊຶ່ງປະກອບດ້ວຍລາຍການດັ່ງຕໍ່ໄປນີ້:

1. ຊື່ໃບອະນຸຍາດ: ໃບອະນຸຍາດຂົນສົ່ງທາງບົກພາຍໃຕ້ສັນຍາອະນຸພາກພື້ນລຸ່ມແມ່ນ້ຳຂອງ;
2. ຊື່ (ແລະເຄື່ອງໝາຍ), ທີ່ຢູ່, ຂໍ້ມູນສຳຫຼັບຕິດຕໍ່ ແລະ ປະເທດຂອງໜ່ວຍງານທີ່ອອກໃບອະນຸ ຍາດ;
3. ຂໍ້ຄວາມອ້າງອີງເຖິງອະນຸສັນຍາ 03 ແລະ ມາດຕາ 23 ຂອງສັນຍາ;
4. ລະຫັດປະເທດ (ເຄື່ອງໝາຍສະແດງປະເທດຕາມທີ່ກຳນົດໄວ້ໃນມາດຕາ 07 (ງ) ຂອງເອກະ ສານຊ້ອນທ້າຍ 02 ຂອງສັນຍາ) ແລະ ໝາຍເລກໃບອະນຸຍາດ;
5. ອາຍຸໃບອະນຸຍາດ;
6. ຊະນິດໃບອະນຸຍາດ ແລະ ຊະນິດຂອງການດຳເນີນການຂົນສົ່ງທີ່ໄດ້ຮັບອະນຸຍາດ (ສິນຄ້າ/ ຜູ້ໂດຍສານປະຈຳທາງ/ບໍ່ປະຈຳທາງ);
7. ສຳລັບພາຫະນະທີ່ໃຊ້ໃນການຂົນສົ່ງຜູ້ໂດຍສານປະຈຳທາງ, ໃຫ້ລະບຸເສັ້ນທາງການຂົນສົ່ງ (ລວມທັງຈຸດເລີ່ມຕົ້ນ ແລະ ຈຸດສິ້ນສຸດຂອງການເດີນທາງ), ຈຳນວນຖ້ຽວໃນການດຳເນີນ ການຂົນສົ່ງ ແລະ ນ້ຳໜັກບັນທຸກສູງສຸດຂອງພາຫະນະຕາມທີ່ເໝາະສົມ;
8. ລາຍລະອຽດຂອງຜູ້ດຳເນີນການຂົນສົ່ງທີ່ເປັນຜູ້ຮັບປະໂຫຍດຈາກໃບອະນຸຍາດ;
9. ບ່ອນຫວ່າງຈຳນວນໜຶ່ງສຳລັບຂຽນໝາຍເລກທະບຽນພາຫະນະທີ່ໄດ້ຮັບການຈັດສັນໃບອະນຸຍາດ;
10. ສະຖານທີ່ ແລະ ວັນທີອອກໃບອະນຸຍາດ; ແລະ
11. ການຮັບຮອງວ່າໃບອະນຸຍາດເປັນຂອງແທ້ (ກາປະທັບ, ລາຍເຊັນ).

ຄະນະກຳມະການຮ່ວມອາດປັບປຸງລາຍການທີ່ຕ້ອງມີຢູ່ໃນໃບອະນຸຍາດຕາມທີ່ເຫັນສົມຄວນ. ຄະ ນະກຳມາທິການຮ່ວມຈະເປັນຜູ້ກຳນົດຮູບແບບ, ລັກສະນະການຈັດວາງ ແລະ ລາຍລະອຽດການຕີພິມຂອງ ໃບອະນຸຍາດ.

ຂ. ການໃຊ້ໃບອະນຸຍາດເປັນຫຼັກຖານ.

1. ພາຫະນະທີ່ໄດ້ຮັບການຈັດສັນໃບອະນຸຍາດ ຈະຕ້ອງມີໃບອະນຸຍາດສະບັບແທ້ຕິດໄວ້ກັບພາ ຫະນະຕະຫຼອດເວລາທີ່ດຳເນີນການຂົນສົ່ງຂ້າມແດນ.
2. ໃບອະນຸຍາດແຕ່ລະສະບັບຈະໃຊ້ໄດ້ກັບພາຫະນະທີ່ມີໝາຍເລກທະບຽນກົງກັບໝາຍເລກທະບຽນທີ່ລະບຸໄວ້ໃນໃບອະນຸຍາດເທົ່ານັ້ນ.

**ມາດຕາ 08: ໄລຍະເວລາສຳລັບການປະຕິບັດຕາມໄລຍະທີ 02 ຂອງສັນຍາ.**

ອະນຸສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ເປັນໄລຍະເວລາ 03 ປີ ຫຼັງຈາກເລີ່ມມີຜົນບັງຄັບໃຊ້. ຈາກ ນັ້ນລັດພາຄີຈະດຳເນີນການປະເມີນສະພາບຕະຫຼາດການຂົນສົ່ງທາງບົກ ແລະ ພິຈາລະນາປ່ຽນແປງໄປສູ່ ລະບົບກົນໄກຕະຫຼາດເສລີຕາມທີ່ລະບຸໄວ້ໃນໄລຍະທີ 02 ຂອງມາດຕາ 23 ຂອງສັນຍາ.

**ມາດຕາ 09: ການດັດແກ້.**

ລັດພາຄີໃດໜຶ່ງ ສາມາດສະເໜີໃຫ້ມີການດັດແກ້ອະນຸສັນຍາໄດ້ ໂດຍຜ່ານຄະນະກຳມະການ ຮ່ວມ, ການດັດແກ້ດັ່ງກ່າວຈະຕ້ອງຜ່ານການເຫັນດີເປັນເອກະພາບຈາກທຸກລັດພາຄີ.

**ມາດຕາ 10: ການໃຫ້ສັດຕະຍາບັນ ຫຼື ການຍອມຮັບ.**

ອະນຸສັນຍາ ຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນ ຫຼື ຍອມຮັບຈາກລັດຖະບານຂອງລັດພາຄີ. ມາດ ຕານີ້ແມ່ນຍັງໃຊ້ກັບກໍລະນີທີ່ມີການດັດແກ້ອະນຸສັນຍາເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

**ມາດຕາ 11: ຜົນບັງຄັບໃຊ້.**

ອະນຸສັນຍາ ຈະມີຜົນບັງຄັບໃຊ້ນັບແຕ່ວັນທີ ທີ່ລັດພາຄີຢ່າງນ້ອຍ 2 ປະເທດ ໄດ້ໃຫ້ສັດ ຕະຍາບັນ ຫຼື ຍອມຮັບ ແລະ ຈະມີຜົນກັບສະເພາະປະເທດທີ່ໃຫ້ສັດຕະຍາບັນແລ້ວເທົ່ານັ້ນ. ມາດຕານີ້ແມ່ນ ຍັງໃຊ້ກັບກໍລະນີທີ່ມີການດັດແກ້ອະນຸສັນຍາເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

**ມາດຕາ 12: ການປັບປຸງກົດໝາຍພາຍໃນປະເທດ.**

ໃນກໍລະນີທີ່ຈຳເປັນ, ລັດພາຄີ ຕ້ອງໄດ້ດຳເນີນການປັບປຸງກົດໝາຍພາຍໃນປະເທດທີ່ກ່ຽວຂ້ອງໃຫ້ສອດຄ່ອງກັບເນື້ອໃນອະນຸສັນຍານີ້.

**ມາດຕາ 13: ຂໍ້ສະຫງວນ.**

ບໍ່ອະນຸຍາດໃຫ້ມີການຕັ້ງຂໍ້ສະຫງວນຕໍ່ອະນຸສັນຍານີ້.

**ມາດຕາ 14: ການຢຸດຕິການນຳໃຊ້ອະນຸສັນຍາ.**

ລັດພາຄີແຕ່ລະປະເທດ ສາມາດຈະຢຸດຕິການນຳໃຊ້ອະນຸສັນຍາຊົ່ວຄາວ ທັງໝົດ ຫຼື ບາງສ່ວນໂດຍທັນທີເມື່ອມີກໍລະນີສຸກເສີນທີ່ມີຜົນກະທົບຕໍ່ຄວາມປອດໄພພາຍໃນປະເທດ. ລັດພາຄີ ຈະຕ້ອງແຈ້ງຕໍ່ລັດພາ ຄີອື່ນຮັບຮູ້ໂດຍໄວທີ່ສຸດກ່ຽວກັບການຢຸດຕິການນຳໃຊ້ອະນຸສັນຍາ ແລະ ຈະສິ້ນສຸດລົງທັນທີທີ່ເຫດການກັບ ສູ່ສະພາວະປົກກະຕິ.

## ມາດຕາ 15: ການພົວພັນກັບສັນຍາ.

ໃນຖານະທີ່ເປັນມາດຕະການໃນການດຳເນີນການຕາມຫຼັກການທີ່ກຳນົດໄວ້ໃນສັນຍາ, ອະນຸສັນຍາ ຈະຕ້ອງບໍ່ມີການບິດເບືອນ ຫຼື ຂັດຕໍ່ຫຼັກການດັ່ງກ່າວ. ໃນກໍລະນີທີ່ມີຂໍ້ຂັດແຍ່ງ ລະຫວ່າງ ອະນຸສັນຍາ ແລະ ສັນຍາ ແມ່ນໃຫ້ຖືເອົາສັນຍາເປັນຫຼັກ ແລະ ໃນກໍລະນີທີ່ມີຂໍ້ຄັດແຍ່ງ ລະຫວ່າງ ອະນຸສັນຍານີ້ກັບອະນຸສັນ ຍາອື່ນ ຫຼື ເອກະສານຊ້ອນທ້າຍ ໃຫ້ຕີຄວາມໝາຍໂດຍອາໄສສັນຍາເປັນຫຼັກ.

## ມາດຕາ 16: ການແກ້ໄຂຂໍ້ຂັດແຍ່ງ.

ທຸກຂໍ້ຂັດແຍ່ງທີ່ເກີດຂຶ້ນກ່ຽວກັບການຕີຄວາມໝາຍ ຫຼື ການນຳໃຊ້ອະນຸສັນສະບັບນີ້ ລະຫວ່າງລັດ ພາຄີ ນັບແຕ່ 2 ປະເທດ ຫຼື ຫຼາຍກວ່ານັ້ນ ຈະຖືກແກ້ໄຂໂດຍກົງ ຫຼື ໂດຍຜ່ານການເຈລະຈາຢ່າງສັນຕິວິທີໃນຄະນະກຳມະການຮ່ວມກັນ.

## ມາດຕາ 17: ການຍົກເລີກ.

ເມື່ອອະນຸສັນຍາມີຜົນບັງຄັບໃຊ້ແລ້ວ, ອະນຸສັນຍານີ້ບໍ່ສາມາດຖືກຍົກເລີກແຍກຕ່າງຫາກຈາກສັນ ຍາໄດ້.

ເພື່ອເປັນພະຍານຕໍ່ເອກະສານນີ້, ຜູ້ລົງນາມຂ້າງລຸ່ມນີ້ ແມ່ນໄດ້ຮັບມອບສິດຢ່າງຖືກຕ້ອງໃນການລົງ ນາມໃນອະນຸສັນຍານີ້.

ລົງນາມທີ່ ປັກກິ່ງ, ວັນທີ 20 ມີນາ 2007 ໂດຍເປັນພາສາອັງກິດ ຊຶ່ງມີຕົ້ນສະບັບຈານວນ 06 ສະ ບັບ.

**ລົງນາມ ໂດຍ:**

ລັດຖະບານແຫ່ງລາຊະອານາຈັກ ກຳປູເຈຍ

ພະນະທ່ານ Tram Iv Tek

ລັດຖະມົນຕີຊ່ວຍວ່າການກະຊວງໂຍທາທິການແລະ ຂົນສົ່ງ

ລັດຖະບານແຫ່ງສາທາລະນະລັດ ປະຊາຊົນ ຈີນ

ພະນະທ່ານ Weng Mengying

ລັດຖະມົນຕີຊ່ວຍວ່າການກະຊວງການສື່ສານ

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພະນະທ່ານ ສົມມາດ ພົນເສນາ

ລັດຖະມົນຕີວ່າການກະຊວງຄົມມະນາຄົມ, ຂົນສົ່ງ, ໄປະສະນີ ແລະ ກໍ່ສ້າງ

ລັດຖະບານແຫ່ງສະຫະພາບ ມຽນມາ

ພະນະທ່ານ Thura Thaung Lwin

ລັດຖະມົນຕີຊ່ວຍວ່າການກະຊວງຂົນສົ່ງທາງລົດໄຟ

ລັດຖະບານແຫ່ງລາຊະອານາຈັກ ໄທ

ພະນະທ່ານ Sansern Wongcha-um

ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ

ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ພະນະທ່ານ Tram Doan Tho

ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ